# ບົດຮຽນໂຮງຮຽນວັນອາທິດ

# ວັນອາທິດ ທີ 27 ມີຖຸນາ 2010 (6-27-2010)

## ເວລາຕັດສິນໃຈຜິດ

**ຂໍ້ພຣະຄັມພີໃນບົດຮຽນ:** 1 ຊາມູເອນ 8:6-9; 12:13-25

### ຜົນສະທ້ອນຕໍ່ຊີວິດ

ບົດຮຽນຈະໃຫ້ຄວາມໝັ້ນໃຈແກ່ທ່ານວ່າຄວາມເຊື່ອໝັ້ນຂອງພຣະເຈົ້າຍັງດຳເນີນຕໍ່ໃນທ່າມກາງຜູ້ທີ່ຕິດຕາມພຣະອົງ ເຖິງແມ່ນວ່າຈະຢູ່ໃນຖ້າມກາງຜູ້ທີ່ຕັດສິນໃຈຜິດ.

### ເປົ້າໝາຍຂອງບົດຮຽນ

ບົດຮຽນນີ້ເວົ້າກ່ຽວກັບຄວາມຂໍຮ້ອງຂອງຊາວອິສຣາເອນຢາກໄດ້ກະສັດ ແລະຜົນສະທ້ອນຂອງການຕັດສິນໃຈຂອງພວກເຂົາ. ຕອນທ້າຍພຣະເຈົ້າໄດ້ປະທານກະສັດໃຫ້ພວກເຂົາ ແຕ່ວ່າພຣະອົງຍັງເປັນຜູ້ບົງການຢູ່.

### ຄວາມສຳຄັນຂອງບົດຮຽນ

ບາງຄັ້ງ ພວກເຮົາຕັດສິນໃຈຜິດ ແຕ່ພຣະເຈົ້າຍັງສາມາດທຳງານຢູ່ໃນທ່າມກາງພວກເຮົາ ແລະຜ່ານພວກ ເຮົາ. ພຣະອົງຈະຍັງຄົງຍຶດໝັ້ນພັນທະສັນຍາໃນຄວາມສຳພັນຂອງພຣະອົງກັບພວກເຮົາ ແລະຍັງຊົງມີຄວາມໝັ້ນ ຄົງຢູ່.

### ການສຶກສາພຣະຄັມພີ

ດ້ວຍຄວາມປາຖນາຄັ້ງດຽວ, ໃນນິທານເຣື່ອງນຶ່ງ ກະສັດ ມິດາ ຮ້ອງຂໍວ່າໃຫ້ທຸກໆສິ່ງທີ່ພຣະອົງແຕະຕ້ອງກາຍເປັນຄຳໄປໝົດ. ພຣະອົງຕ້ອງການຄວາມໂດ່ງດັງ ແລະຄວາມຮັ່ງມີ, ພຣະອົງກໍໄດ້ທັງສອງແນວ--ແຕ່ບໍ່ມີສິ່ງໃດເລີຍໄດ້ສົມກັບຄວາມປາຖນາ. ເວລາພຣະອົງແຕະຕ້ອງດອກໄມ້ມັນກໍກາຍເປັນຄຳ. ເວລາພຣະອົງແຕະຕ້ອງອາຫານມັນກໍກາຍເປັນຄຳ. ຄວາມເຫັນແກ່ຕົວຂອງພຣະອົງເປັນການຕັດສິນໃຈຜິດ. ການເລືອກຜິດໄດ້ນຳໄປເຖິງ ຜົນສະທ້ອນອັນເສັຍຫາຍອັນຮ້າຍແຮງ.

ຊາວອິສຣາເອນຕ້ອງການມີກະສັດ ມັນຂັດຂວາງກັບການທີ່ພຣະເຈົ້າບໍ່ຕ້ອງການໃຫ້ພວກເຂົາມີ. ພວກເຂົາຍັງຂັດເອົາກະສັດຢ່າງໂງ່ໆ ແລະຜົນຂອງການຕັດສິນໃຈຂອງພວກເຂົາກໍໄດ້ນຳຄວາມຕົກຕໍ່າມາສູ່ພວກເຂົາ ໝົດທັງຊາດນຳກັນ. ເໝືອນກັນກັບກະສັດ ມິດາ, ພວກອິສຣາເອນໄດ້ຮູ້ວ່າຄວາມປາຖນາ ແລະຄວາມຢາກໄດ້ຂອງພວກເຂົາໄດ້ນຳພວກເຂົາມາເຖິງຜົນສະທ້ອນອັນໜ້າທົດທູ່.

**1. <u>ຈົ່ງເອົາສິ່ງທີ່ຂ້ອຍຕ້ອງການໃຫ້ຂ້ອຍແດ່:</u>** 1 ຊາມູເອນ 8:6-9

ຊາວອິສຣາເອນມີຄວາມຕົກໃຈໃນເມື່ອພວກເຂົາເຫັນວ່າລູກຂອງທ່ານ ຊາມູເອນ ບໍ່ໄດ້ໃຊ້ຊີວິດເດີນຕາມພຣະເຈົ້າເໝືອນພໍ່ (1 ຊາມູເອນ 8:1-15). ພວກເຂົາໄດ້ປະສົບກັບຊີວິດແບບນີ້ມາກ່ອນໃນສມັຍຂອງທ່ານ ເອລີ (1

ຊມອ 2:22-26), ແຕ່ພວກເຂົາໄດ້ລືມໄປວ່າພຣະເຈົ້າໄດ້ປະທານຜູ້ນຳຝ່າຍຈິດວິນຍານຄືທ່ານ ຊາມູເອນ ແທນບ່ອນລູກຊາຍຜູ້ບໍ່ຟັງຄວາມຂອງທ່ານ ເອລີ. ການຂາດຄວາມອົດທົນເປັນບໍ່ເກີດແຫ່ງຄວາມເສັຽຫາຍ ໃຫ້ພວກເຂົາໃນສມັຍນັ້ນ ແລະກໍເປັນກັບພວກເຮົາໄດ້ຄືກັນ. ແທນທີ່ຈະເກີດຄວາມຕົກໃຈໃນເວລາເຫັນພາວະການຄັບຂັນເກີດຂຶ້ນ, ພວກເຮົາຄວນຮຽນລໍຄອຍດ້ວຍຄວາມອົດທົນໃຫ້ພຣະເຈົ້າປະທານໃຫ້ແກ່ພວກເຮົາ.

ປະຊາຊົນໄດ້ເວົ້າກັບທ່ານ ຊາມູເອນວ່າ "ຈົ່ງແຕ່ງຕັ້ງກະສັດໃຫ້ປົກຄອງພວກຂ້ານ້ອຍ." ທ່ານ ຊາມູເອນໄດ້ອ້ອນວອນອະທິຖານຕໍ່ພຣະເຈົ້າເພື່ອໃຫ້ໄດ້ຄວາມແນ່ນອນວ່າເຣື່ອງທີ່ທ່ານບໍ່ພໍໃຈນັ້ນກໍບໍ່ແມ່ນນ້ຳພຣະທັຍຂອງພຣະເຈົ້າຄືກັນ. ທ່ານ ຊາມູເອນ ໄດ້ເຮັດສິ່ງທີ່ປະຊາຊົນຄວນທຳແຕ່ບໍ່ໄດ້ເຮັດ. ພວກເຂົາຕ້ອງຢາກແຂ່ງຂັນກັບປະເທດເພື່ອນບ້ານດ້ວຍການມີກະສັດປົກຄອງ, ແຕ່ບໍ່ໄດ້ອະທິຖານຕໍ່ພຣະເຈົ້າກ່ຽວກັບເຣື່ອງນີ້.

ພຣະເຈົ້າຊົງໄດ້ເວົ້າກັບທ່ານ ຊາມູເອນ ແລະເນັ້ນໜັກເຖິງຄວາມບໍ່ພໍພຣະທັຍຂອງພຣະອົງໃນການທີ່ພວກເຂົາຂໍໃຫ້ມີກະສັດ. ພຣະອົງຍັງຊົງຍ້ຳອີກວ່າພວກເຂົາບໍ່ໄດ້ປະຖິ້ມ ຊາມູເອນ ແຕ່ໄດ້ປະຖິ້ມການອາສັຍໃຫ້ພຣະເຈົ້າເປັນກະສັດຢູ່ໃນຊີວິດຂອງພວກເຂົາ. ຄວາມຊົ່ວຂອງລູກຊາຍທ່ານ ຊາມູເອນ ເຮັດໃຫ້ຄົນຢ້ານຈຶ່ງໄດ້ຂໍໃຫ້ມີກະສັດ, ແຕ່ພຣະເຈົ້າເຫັນວ່າພວກເຂົາປະຖິ້ມພຣະອົງ. ພວກເຂົາໄວ້ວາງໃຈໃນມະນຸດຫຼາຍກວ່າພຣະເຈົ້າ ເພາະວ່າພວກເຂົາຢາກໄດ້ຕາມວິທີທາງຂອງເຂົາ ແທນທີ່ຈະຕາມວິທີທາງຂອງພຣະເຈົ້າ. ພວກເຂົາພາກັນເຂົ້າໄປຫາຄວາມລົ້ມເຫຼວ.

ພຣະເຈົ້າບອກເຖິງສອງແນວທີ່ຄວາມເຫັນແກ່ຕົວຂອງພວກເຂົາ ເປັນຜົນສະທ້ອນຕໍ່ຄວາມສັມພັນຂອງພວກເຂົາກັບພຣະເຈົ້າ; ພວກເຂົາໄດ້ປະຖິ້ມພຣະເຈົ້າ ແລະໄປນະມັສການພຣະອື່ນ. ເຊື່ອໃຈໃນກະສັດແທນພຣະເຈົ້າໝາຍເຖິງພວກເຂົາໄດ້ປະຖິ້ມພຣະເຈົ້າ. ປະຊາຊົນປ່ຽນຄວາມວາງໃຈໃນພຣະເຈົ້າໄປຫາຄວາມໄວ້ໃຈໃນມະນຸດ. ພວກເຂົາຍ້າຍການນະມັສການຈາກພຣະເຈົ້າໄປຫາກະສັດ.

ພວກເຮົາຈຳຕ້ອງຮັກສາບໍ່ເອົາສິ່ງຂອງທີ່ເຮົາມັກມາແທນທີ່ຂອງພຣະເຈົ້າ. ການມີກະສັດບໍ່ແມ່ນການບໍ່ດີ, ແຕ່ການວາງໃຈເຊື່ອໃນກະສັດແທນພຣະເຈົ້ານັ້ນບໍ່ດີ. ກະສັດປົກຄອງແທນພຣະເຈົ້າໃນຊີວິດຂອງຄົນໃນຊາດ ແລະຄວາມຕ້ອງການຂອງເຂົາກາຍເປັນຄວາມສາບແຊ່ງ--ເໝືອນກັນກັບທີ່ກະສັດ ມີດາ ແຕະຕ້ອງສິ່ງຂອງ.

## 2. <u>ຜົນສະທ້ອນຂອງການເລືອກຂອງເຮົາ</u>: 1 ຊາມູເອນ 12:13-19

ພຣະເຈົ້າບໍ່ໄດ້ປະຖິ້ມຊາວອິສຣາເອນເພາະພວກເຂົາໄດ້ເລືອກທາງຜິດ, ແຕ່ພຣະອົງຊົງໄດ້ທົບທວນໃຫ້ພວກເຂົາຈຳ ວ່າພວກເຂົາຍັງມີສິ່ງທີ່ຕ້ອງທຳຄື ຢຳເກງພຣະເຈົ້າ, ນະມັສການ, ແລະເຊື່ອຟັງພຣະອົງ. ຜູ້ທີ່ຕໍ່ສູ້ພຣະເຈົ້າຍັງມີໂອກາດກັບໃຈຕ່າວຄືນຫາພຣະເຈົ້າ, ແຕ່ວ່າພວກເຂົາຍັງຕ້ອງປະເຊີນຮັບໜ້າກັບຜົນຂອງການເລືອກຜິດ. ຈົ່ງສັງເກດວ່າທຳອິດພຣະເຈົ້າໄດ້ເຕືອນເຂົາວ່າປະຊາຊົນໄດ້ເລືອກເອົາກະສັດ, ແຕ່ແລ້ວພຣະອົງຊົງເອີ້ນວ່າ ກະສັດທີ່ພຣະເຈົ້າຊົງໄດ້ຕັ້ງໄວ້ປົກຄອງພວກທ່ານ.

ໃນທ່າມກາງທີ່ຄວາມບໍ່ເຊື່ອຟັງຂອງພວກເຂົາໃນການຮ້ອງຂໍໃຫ້ມີກະສັດ, ພຣະເຈົ້າໄດ້ທ້າທາຍໃຫ້ປະຊາຊົນຕິດຕາມພຣະອົງ. ພຣະອົງຍັງຊົງໄດ້ເຕືອນພວກເຂົາວ່າການບໍ່ເຊື່ອຟັງພຣະອົງຈະເປັນເຫດໃຫ້ພຣະຫັດຂອງພຣະອົງທຳການຕໍ່ສູ້ກັບພວກເຂົາ. ພຣະເຈົ້າຕ້ອງການໃຫ້ພວກເຂົາເຫັນສິ່ງຊົ່ວຮ້າຍໃນການທີ່ພວກເຂົາວາງໃຈເຊື່ອຟັງກະສັດແທນທີ່ຂອງພຣະອົງ, ແຕ່ວ່າພຣະອົງຍັງຄອງຄອຍໃຫ້ພວກເຂົາປ່ຽນໃຈຈາກຄວາມບາບ ແລະກັບຄືນຫາພຣະອົງ.

ທ່ານຊາມູເອນ ໄດ້ອະທິຖານໃນນາມຂອງປະຊາຊົນ, ພຣະເຈົ້າໄດ້ສົ່ງສຽງຟ້າຮ້ອງແລະຝົນຕົກລົງມາ ເປັນເຄື່ອງສັນຍານເຖິງຣິດອຳນາດຂອງພຣະອົງ ທີ່ກະສັດຜູ້ທີ່ເປັນມະນຸດເຮັດບໍ່ໄດ້. ປະຊາຊົນມີຄວາມຢ້ານກົວພຣະເຈົ້າ

ຫຼາຍ, ພວກເຂົາໄດ້ຮ້ອງຂໍໃຫ້ທ່ານ ຊາມູເອນ ອະທິຖານເພື່ອພວກເຂົາ ເພື່ອວ່າພຣະເຈົ້າຈະຍົກເວັ້ນພວກເຂົາຈາກຄວາມບາບທີ່ພວກເຂົາໄດ້ທຳ.

ເຖິງແມ່ນວ່າ ພວກເຮົາໄດ້ເລືອກທາງຜິດ, ພວກເຮົາຍັງສາມາດກັບຄືນມາຫາພຣະເຈົ້າ. ດ້ວຍການຮັບຮູ້ວ່າເຮົາໄດ້ເຮັດຜິດບາບ, ພວກເຮົາອາດໄດ້ຫຼີກຈາກຄວາມຕັດສິນລົງໂທດໃນຄວາມຜິດບາບຂອງເຮົາ, ແຕ່ພວກເຮົາຍັງອາດໄດ້ຮັບໝາກຜົນຂອງຄວາມຜິດບາບທີ່ເຮົາໄດ້ທຳ. ພຣະເຈົ້າຍົກໂທດຄວາມບາບໃຫ້ໄດ້ ແຕ່ບໍ່ໄດ້ລຶບລ້າງຮອຍແຜທີ່ເປັນແປ້ວຕິດຢູ່ໃນຕົວເຮົາເພື່ອເປັນເຄື່ອງເຕືອນໃຈ. ຂ່າວສຳຄັນອັນຍິ່ງໃຫຍ່ໃນບົດນີ້ແມ່ນວ່າ ເຖິງພວກເຮົາໄດ້ທຳບາບພຣະເຈົ້າຍັງສາມາດທຳງານໃຫ້ເຖິງຈຸດປະສົງຂອງພຣະອົງດ້ວຍພວກເຮົາ. ມັນເປັນເລື່ອງທີ່ໜ້າຢ້ານທີ່ຮູ້ວ່າຄວາມບາບຂອງເຮົາມີຜົນສະທ້ອນຕາມມາ, ແຕ່ກໍເປັນທີ່ໜ້າອຸ່ນໃຈທີ່ຮູ້ວ່າພຣະເຈົ້າຍັງໃຊ້ພວກເຮົາທ່າມກາງຄວາມບາບຂອງເຮົາ ຖ້າພວກເຮົາຫັນໜ້າເພິ່ງພຣະອົງ ແລະ ຫັນໜ້າໜີຈາກຄວາມບາບ.

## 3. <u>ຂໍ້ສລຸບ:ພຣະເຈົ້າຍັງເປັນຜູ້ບົງການ</u>: 1 ຊາມູເອນ 12:20-25

ທ່ານ ຊາມູເອນ ຢ້ານວ່າບາງຄົນອາດໃຊ້ຄວາມບາບຂອງເຂົາເປັນເຫດຜົນເຊົາການຕິດຕາມພຣະເຈົ້າ. ເໝືອນກັນໃນສມັຍນີ້ ມີຫຼາຍຄົນຮູ້ສຶກວ່າຕົນເອງໄດ້ຫ່າງໄກຈາກຄວາມຮັກສາຂອງພຣະເຈົ້າ, ບາງຄົນອາດຈະໄດ້ຮູ້ ສຶກວ່າພຣະເຈົ້າອາດໄດ້ຊົງປະຖິ້ມພວກເຂົາເພາະຄວາມທີ່ພວກເຂົາໄດ້ຂໍເອົາກະສັດ. ທ່ານ ຊາມູເອນ ໄດ້ໜູນໃຈເຂົາ ວ່າ "ຢ່າຢ້ານກົວເລີຍ" ເພາະວ່າພວກເຂົາໄດ້ທຳບາບແລ້ວ, ພວກເຂົາຕ້ອງຫັນໜ້າເຂົ້າຫາພຣະເຈົ້າ ແລະຕ້ອງຕິດຕາມພຣະເຈົ້າຕໍ່ໄປ. ທ່ານ ຊາມູເອນ ຍັງໄດ້ເຕືອນພວກເຂົາ ຢ່າວາງໃຈໃນສິ່ງທີ່ບໍ່ມີຄຸນຄ່າຕໍ່ໄປ.

ພຣະເຈົ້າໄດ້ຊົງລົງທຶນພັກນຳຊາວອິສຣາເອນ; ພວກເຂົາເປັນຕົວແທນນາມຊື່ອັນຍິ່ງໃຫຍ່ຂອງພຣະອົງ ແລະເປັນໝາກຜົນໃນການຕັດສິນພຣະທັຍພຣະອົງທີ່ຕັ້ງໃຫ້ເປັນໄພ່ພົນຂອງພຣະອົງ. ພຣະເຈົ້າບໍ່ໄດ້ຊົງປະທານພຣະຄຸນໃຫ້ພວກເຂົາເພາະວ່າພວກເຂົາສົມຄວນຈະໄດ້ຮັບ ແຕ່ເປັນເພາະວ່າພຣະອົງໄດ້ລົງທຶນພຣະອົງເອງສຳລັບຄວາມເປັນຢູ່ໃນຊີວິດຂອງພວກເຂົາ. ເຖິງແມ່ນປະຊາຊົນໄດ້ປະສົບກັບຄວາມເສັຽໃຈຈາກຄວາມບາບຂອງເຂົາ, ພຣະເຈົ້າຍັງມີຄວາມຕ້ອງການຢາກໃຫ້ພວກເຂົານະມັສການພຣະອົງ ແລະນຳເອົາຣັສມີມາເທີດທູນພຣະນາມຂອງພຣະອົງ. ພຣະອົງໄດ້ຊົງສັນຍາວ່າພຣະອົງຈະບໍ່ປະຖິ້ມພວກເຂົາ.

ໃນຖານະທີ່ເປັນປະໂຣຫິດ, ທ່ານ ຊາມູເອນ ມີຄວາມຈຳເປັນຕ້ອງອະທິຖານເພື່ອໄພ່ພົນ ແລະສັ່ງສອນພຣະຄຳຂອງພຣະເຈົ້າໃຫ້ພວກເຂົາ. ທ່ານໄດ້ຕັ້ງໃຈທຳທັງສອງຢ່າງໄດ້ດີ ເຖິງແມ່ນພວກເຂົາໄດ້ຫ່າງຈາກນ້ຳພຣະທັຍຂອງພຣະເຈົ້າສຳລັບພວກເຂົາທັງຊາດ. ທ່ານໄດ້ຮຽກເອີ້ນໃຫ້ພວກເຂົາຈົດຈຳສິ່ງຍິ່ງໃຫຍ່ທີ່ພຣະອົງໄດ້ຊົງກະທຳເພື່ອພວກເຂົາ, ແນ່ນອນທີ່ພວກເຂົາໄດ້ຮູ້ແລ້ວນັ້ນຄືການໄດ້ອອກຈາກການເປັນທາດທີ່ປະເທດອີຢີບ ແລະການຕີເອົາແຜ່ນດິນແຫ່ງພຣະສັນຍາ. ພຣະເຈົ້າຊົງຕຽມພ້ອມທີ່ຈະໃຫ້ອະພັຍໂທດໄພ່ພົນຂອງພຣະອົງ ແລະອວຍພຣະພອນໃຫ້ພວກເຂົາ--ເຖິງຈະມີກະສັດ ຫຼືບໍ່ມີກໍຕາມ.

ເຖິງຢ່າງໃດກໍຕາມ, ທ່ານ ຊາມູເອນ ໄດ້ໃຫ້ຄຳເຕືອນຕໍ່ພວກເຂົາຢ່າງຈິງຈັງວ່າ ຖ້າພວກປະຊາຊົນຍັງດຳເນີນການໄຫວ້ພຣະທຽມແທນທີ່ຂອງພຣະອົງ, ຄົນໝົດທັງຊາດພ້ອມດ້ວຍກະສັດຈະຖືກກວາດລ້າງໜີໄປ ຖ້າວ່າພວກເຂົາວາງໃຈເຊື່ອໃນຜິດບ່ອນ. ພຣະເຈົ້າຈະຕັດສິນລົງໂທດໄພ່ພົນຂອງພຣະອົງ ຖ້າວ່າພວກເຂົາຍັງປະຖິ້ມພຣະອົງ ແລະໄຫວ້ພຣະເຈົ້າອື່ນ--ແລະພຣະອົງກໍໄດ້ກະທຳແທ້.

ຢ່າຖືເບົາຕໍ່ຄວາມສຳຄັນໃນການອະທິຖານຂອງຜູ້ນຳເພື່ອໄພ່ພົນຂອງເຂົາ. ພຣະເຈົ້າຍັງຊົງເປັນຜູ້ບັນຊາແຕ່

ພຣະອົງຍັງຄອງຄອຍທີ່ຈະຕອບຄຳໄຫວ້ວອນອະທິຖານຂອງຜູ້ທີ່ມີໃຈຈິດຈໍ່ຕາມນ້ຳພຣະທັຍຂອງພຣະອົງ. ທ່ານ ຊາມູເອນ ສົມຄວນທີ່ມີຄວາມກັບໃຈກັບພວກໄພ່ພົນ ແລະພວກເຂົາກັບທ່ານຄືກັນ, ແຕ່ວ່າຄວາມສັມພັນລະຫວ່າງຜູ້ປະກາດພຣະທັມກັບໄພ່ພົນຂອງພຣະເຈົ້າດຳເນີນໄປດ້ວຍການເກີດຜົນອັນດີ.

ທັງສອງ ພຣະເຈົ້າແລະທ່ານ ຊາມູເອນ ບໍ່ໄດ້ປະຖິ້ມຊາວອິສຣາເອນ ເຖິງວ່າພວກເຂົາໄດ້ທຳບາບ, ພຣະເຈົ້າຍັງດຳເນີນຕໍ່ທ້າທາຍພວກເຂົາໂດຍຜ່ານທາງຜູ້ປະກາດພຣະທັມ ຊາມູເອນ. ພຣະອົງຈະບໍ່ປະຖິ້ມພວກເຂົາ ຖ້າພວກເຂົາສາຣະພາບຜິດ, ແລະທ່ານ ຊາມູເອນກໍເໝືອນກັນ. ພຣະຄຸນອັນທີ່ຮັກຄົນບາບ ແຕ່ຊິງຊັງຄວາມບາບ, ໄດ້ເສີມສ້າງໝາກຜົນອັນດີ.

## ບົດຮຽນຊີວິດ:

ຜູ້ຄົນເລືອກສິ່ງທີ່ຜິດ, ບາງຄັ້ງແມ່ນຜູ້ທີ່ເຮົາໄດ້ແຕ່ງງານນຳ ຫຼືຜູ້ທີ່ເຮົາຢາກແຕ່ງງານນຳແຕ່ໄດ້ປ່ອຍໄປ. ສ່ວນຫຼາຍຈະເປັນເຄື່ອງທີ່ພວກເຮົາບໍ່ມີເງິນທີ່ຈະຊື້. ພວກເຮົາອາດຈະເລືອກເພື່ອນທີ່ຜິດ ຫຼືວຽກງານທີ່ຜິດ. ທຸກໆ ຄົນເດີນງົມໄປຈາກທາງທີ່ຖືກຕ້ອງບາງຄັ້ງ ແລະຢ່າໃຊ້ໃຫ້ເປັນເຫດຜົນຂອງຂໍ້ແກ້ຕົວ. ເຖິງຢ່າງໃດກໍຕາມ, ພຣະເຈົ້າຍັງຕ້ອງການດຳເນີນຕໍ່ທຳງານໃນຄົນທີ່ກັບຄືນຫັນໜ້າຫາພຣະອົງ. ບາງຄັ້ງ ພວກເຮົາຕ້ອງຮັບຄວາມທໍຣະມານຈາກຜົນສະທ້ອນຂອງການກະທຳຂອງເຮົາ, ແຕ່ພຣະເຈົ້າຍັງສາມາດສຳເຣັດຜົນຈຸດປະສົງຂອງ ພຣະອົງໃນພວກເຮົາຖ້າມກາງການຕັດສິນໃຈເລືອກທາງຜິດຂອງເຮົາ.

ໃນເວລາທີ່ເຮົາປະເຊີນໜ້າກັບການຕັດສິນໃຈທີ່ສຳຄັນ, ພວກເຮົາຈຳເປັນຕ້ອງເຮັດແບບນີ້ເລື້ອຍໆ:

- ຈຳໄວ້ວ່າເຈາະຈົງໃສ່ແຕ່ວິທີທາງຂອງເຮົາເອງສາມາດນຳໄປເຖິງຜົນເສັຽຫາຍໃນຄວາມສຳພັນຂອງ ເຮົາກັບພຣະເຈົ້າ.
- ຈົ່ງຮັບຮູ້ວ່າການໃຫ້ອະພັຍໂທດໃນຄວາມບາບ ບໍ່ໄດ້ລຶບລ້າງຜົນສະທ້ອນຂອງຄວາມບາບຕລອດ. ພວກເຮົາສາມາດໄດ້ຮັບຄວາມອະພັຍບາບ ແຕ່ຍັງຕ້ອງຈ່າຍຄ່າຂອງຄວາມບາບຢູ່.
- ຈົ່ງຈຳວ່າ ພຣະເຈົ້າຍັງໃຊ້ພວກເຮົາຢູ່ ເຖິງແມ່ນຫລັງຈາກພວກເຮົາໄດ້ທຳຜິດບາບ.
- ຈົ່ງຮັບວ່າພຣະເຈົ້າຍັງຊົງບັງຄັບບັນຊາໃນຊີວິດຂອງເຮົາຢູ່. ພຣະອົງຍັງຊົງຈະຮັບການສັຣເສີນ ເຖິງຈະມີພວກເຮົາ ຫຼືບໍ່ມີກໍຕາມ. ຈະເປັນການດີເທົ່າໃດຖ້າພວກເຮົາຮ່ວມມືກັບພຣະເຈົ້າ ດີກວ່າທີ່ພຣະອົງໄດ້ຮັບການສັຣເສີນໂດຍບໍ່ມີພວກເຮົາ.

ພັລຍາຂອງຂ້າພະເຈົ້າໂທມາໃນເວລາທີ່ລາວ ຫລົງທາງ ເວລາກຳລັງໄປ ໄປສະນີ, ມັນທຳໃຫ້ຂ້າພະເຈົ້າງົງ ເພາະວ່າຂ້າພະເຈົ້າໄດ້ເອົາເຄື່ອງຊີ້ນຳທາງ ຈີພີແອສ ໃຫ້ລາວກ່ອນໄປ. ລາວກໍໄດ້ຕັ້ງລາຍການໃສ່ຢ່າງຖືກຕ້ອງແລ້ວຂ້າພະເຈົ້າກໍບໍ່ຮູ້ຈັກວ່າບັນຫານັ້ນເປັນຍ້ອນຫຍັງ. ຫລັງຈາກນັ້ນ, ຂ້າພະເຈົ້າກໍໄດ້ຍິນສຽງຂອງລາວຖຽງກັບເຄື່ອງຈີພີແອສ. ເວລາສຽງຂອງເຄື່ອງ ຈີພີແອສ ບອກໃຫ້ລາວລ້ຽວຂວາ, ລາວບອກວ່າມັນເວົ້າຜິດ. ເຄື່ອງ ຈີພີແອສ ບໍ່ຟັງຄວາມ! ພຣະເຈົ້າສ້າງພວກເຮົາໃຫ້ສັຣເສີນພຣະອົງ, ແລະພວກເຮົາຄວນຟັງເຮັດຕາມຄຳສັ່ງຂອງພຣະອົງກໍຈະດີກວ່າທີ່ຈະດື້ໄປເຮັດຕາມວິທີຂອງຕົນເອງ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ BS